**ມິຊຊາອາທິດທີ 3 ກຳນົດປາສກາ**

**ວັນທີ 18 ເມສາ 2021**



**ພຣະວໍລະສານໂດຍນັກບຸນລູກາ 24, 35-48**

ສ່ວນສາວົກສອງຄົນທີ່ກັບຈາກບ້ານແອມມາອູສນັ້ນ ກໍໄດ້ເລົ່າເຫດການທີ່ໄດ້ເປັນມາຕາມທາງໃຫ້ພວກອັກຄະສາວົກທັງສິບເອັດທີ່ກຳລັງຊຸມນຸມກັນຢູ່ກັບສາວົກອື່ນໆອີກ, ແລະເລື່ອງພວກເຂົາຈື່ພຣະອົງໄດ້ໃນເວລາພຣະອົງຊົງບິຂະໜົມປັງ. ເວລາທັງສອງກຳລັງເລົ່າເລື່ອງຢູ່, ພຣະເຢຊູເຈົ້າຊົງປະຈັກມາທ່າມກາງພວກເຂົາກ່າວວ່າ: “ສັນຕິສຸກຈົ່ງມີແກ່ພວກເຈົ້າ”. ພວກສາວົກກໍຕົກໃຈຢ້ານຄຶດວ່າໄດ້ເຫັນຜີ. ແຕ່ພຣະເຢຊູເຈົ້າຊົງກ່າວກັບພວກເຂົາວ່າ: “ພວກເຈົ້າຕື່ນຕົກໃຈດ້ວຍເຫດໃດ, ແລະເປັນຫຍັງຈຶ່ງຍັງສົງໃສຢູ່? ຈົ່ງເບິ່ງມືແລະເທົ້າຂອງເຮົາ; ແມ່ນເຮົາຈິງແທ້; ຈົ່ງມາບາຍເບິ່ງແລະຈົ່ງຮູ້ດີວ່າ ຜີບໍ່ມີຊີ້ນບໍ່ມີກະດູກຢ່າງເຮົາຄືພວກເຈົ້າເຫັນມີນີ້ດອກ.” ຕໍ່ມາພຣະອົງກໍສະແດງພຣະຫັດແລະພຣະບາດຂອງພຣະອົງໃຫ້ພວກເຂົາເບິ່ງ. ແຕ່ເຖິງພວກເຂົາຈະຕື່ນເຕັ້ນຍິນດີຢູ່ແລ້ວ, ກໍຍັງງຶງງຶດຢູ່ແລະບໍ່ແນ່ໃຈ. ພຣະອົງຈຶ່ງກ່າວວ່າ: “ຢູ່ນີ້ພວກເຈົ້າມີຫຍັງກິນບໍ? ພວກເຂົາຈຶ່ງເອົາປາປີ້ງຕ່ອນໜຶ່ງມາຖະຫວາຍພຣະອົງ. ພຣະອົງຈັບເອົາປາປີ້ງ, ແລ້ວຮັບປະທານຕໍ່ໜ້າພວກເຂົາ.

ຕໍ່ໄປ ພຣະອົງຊົງກ່າວກັບພວກເຂົາວ່າ: “ນີ້ແຫລະຄວາມເວົ້າທີ່ເຮົາໄດ້ກ່າວໃຫ້ພວກເຈົ້າຟັງ, ເວລາເຮົາຍັງຢູ່ນຳພວກເຈົ້າ: ທຸກສິ່ງທີ່ຂຽນໄວ້ກ່ຽວກັບເຮົາໃນພຣະທຳບັນຍັດຂອງທ່ານໂມແຊ, ໃນໜັງສືປະພາສົກແລະບົດເພງສັກສິດທັງຫລາຍຕ້ອງເປັນອັນສຳເລັດໄປ.” ແລ້ວພຣະອົງຊົງເປີດສະຕິປັນຍາຂອງພວກເຂົາໃຫ້ເຂົ້າໃຈພຣະຄຳພີ. ແລະພຣະອົງຊົງກ່າວກັບພວກເຂົາວ່າ: “ດັ່ງນີ້, ໄດ້ມີຄຳຂຽນໄວ້ວ່າພຣະກຣິສໂຕເຈົ້າຈະຕ້ອງໄດ້ຮັບທໍຣະມານ ແລະຈະກັບເປັນຄືນມາຈາກພວກຜູ້ຕາຍໃນວັນທີ່ສາມ. ແລະເດຊະພຣະນາມຂອງພຣະອົງ, ການເປັນທຸກກັບໃຈ ແລະການຍົກບາບຈະຕ້ອງຖືກປະກາດແກ່ນານາຊາດ, ໃຫ້ເລີ່ມຕົ້ນແຕ່ນະຄອນເຢຣູຊາແລມກ່ອນ. ພວກເຈົ້າເປັນພະຍານໃນຂໍ້ທີ່ເປັນມາແລ້ວນີ້”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນບົດອ່ານທີໜຶ່ງແລະທີສອງຂອງວັນອາທິດນີ້ພວກເຮົາເຫັນວ່າ ຫລັງຈາກທີ່ພຣະເຢຊູເຈົ້າໄດ້ກັບເປັນຄືນມາຈາກຄວາມຕາຍ, ແທນທີ່ພວກລູກສິດຈະມີຄວາມຢ້ານກົວພວກເຂົາພັດມີຄວາມກ້າຫານ. ແລະສິ່ງທີ່ພວກເຂົາໄດ້ຟັງພຣະເຢຊູເຈົ້າເທດສອນແຕ່ກ່ອນນັ້ນ, ດຽວນີ້ພວກເຂົາກໍໄດ້ເຂົ້າໃຈແລະເປັນພິຍານເຖິງສິ່ງທີ່ພວກເຂົາໄດ້ເຫັນແລະໄດ້ຟັງ. ພວກເຂົາຈຶ່ງເລີ່ມຕົ້ນປະກາດຂ່າວດີແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າໃຫ້ກັບທຸກຄົນ ໂດຍເລີ່ມຕົ້ນຈາກນະຄອນເຢລູຊາແລມໄປເຖິງສຸດແຜ່ນດິນໂລກ.

ພວກສາວົກປະກາດຂ່າວດີຂອງພຣະເຢຊູເຈົ້າຢ່າງໃດ? ພວກເຂົາພະຍາຍາມຊ່ວຍໃຫ້ຜູ້ທີ່ຟັງພວກເຂົາສຳນຶກໄດ້ເຖິງສິ່ງທີ່ຕົນໄດ້ກະທຳຜິດຕໍ່ພຣະເຢຊູເຈົ້າ. ແລະການທີ່ພຣະເຢຊູເຈົ້າຕ້ອງຖືກທໍລະມານແລະຕາຍບົນໄມ້ກາງເຂນນັ້ນແມ່ນຍ້ອນບາບໂທດຂອງພວກເຂົານັ້ນເອງ. ຈາກນັ້ນ, ພວກສາວົກກໍບໍ່ໄດ້ຕັດສິນຜູ້ທີ່ຟັງພວກເຂົາ, ແຕ່ພວກສາວົກຮ້ອງຂໍໃຫ້ຜູ້ທີ່ຟັງພວກເຂົາໃຫ້ກັບໃຈແລະຫັນມາຄືນດີກັບພຣະເຈົ້າ. ເພື່ອຈະໄດ້ຮັບການອະໄພໂທດຈາກພຣະອົງ.

ກ່ອນທີ່ພວກສາວົກຈະມີຄວາມກ້າຫານແລະຄວາມສາມາດໃນການເປັນພິຍານແລະປະກາດຂ່າວດີເຖິງການກັບເປັນຄືນມາຂອງພຣະເຢຊູເຈົ້ານີ້, ພວກເຂົາເອງຕ້ອງໄດ້ມີປະສົບການໃນການພົບພໍ້ກັບພຣະເຢຊູຜູ້ກັບເປັນຄືນມາຈາກຄວາມຕາຍ. ດັ່ງທີ່ພວກເຮົາໄດ້ຟັງໃນພຣະວໍລະສານຂອງວັນນີ້. ພຣະເຢຊູເຈົ້າໄດ້ປະຈັກມາທ່າມກາງພວກລູກສິດ, ພວກເຂົາໄດ້ເຫັນ, ໄດ້ສຳພັດແລະໄດ້ກິນຮ່ວມກັບພຣະອົງ. ຈາກນັ້ນ, ພຣະເຢຊູເຈົ້າກໍໄດ້ສົ່ງພວກເຂົາໄປເພື່ອເປັນພິຍານເຖິງປະສົບການແຫ່ງການພົບພໍ້ກັບພຣະອົງຜູ້ໄດ້ກັບເປັນຄືນມາຈາກຄວາມຕາຍ.

ທຸກຄັ້ງໃນຕອນທ້າຍຂອງພິທີບູຊາມິຊຊາ, ພຣະເຢຊູເຈົ້າກໍໄດ້ສົ່ງພວກເຮົາໄປເພື່ອເປັນພິຍານເຖິງພຣະອົງ. ຍ້ອນພວກເຮົາໄດ້ພົບພໍ້ພຣະອົງຜູ້ກັບເປັນຄືນມາຈາກຄວາມຕາຍໃນພິທີບູຊາມິຊຊາຜ່ານທາງວາຈາຂອງພຣະອົງ. ແລະໃນສິນມະຫາສະໜິດອັນແມ່ນພຣະກາຍແລະພຣະໂລຫິດຂອງພຣະອົງ. ດ້ວຍເຫດນີ້, ເມື່ອພວກເຮົາອອກຈາກພິທີບູຊາມິຊຊາແລ້ວ, ພວກເຮົາຕ້ອງເປັນເໝືອນພວກລູກສິດຄືເປັນພິຍານແລະປະກາດເຖິງການກັບເປັນຄືນມາຂອງພຣະອົງໃຫ້ກັບຄົນອື່ນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດທຳໃຫ້ລູກເປັນພິຍານແລະຜູ້ປະກາດເຖິງພຣະອົງຢ່າງແທ້ຈິງຜ່ານທາງປະສົບການແຫ່ງການພົບພໍ້ກັບພຣະອົງໃນຊີວິດຂອງລູກ. ໂດຍສະເພາະແມ່ນໃນວາຈາຂອງພຣະອົງແລະໃນສິນມະຫາສະໜິດນັ້ນເອງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ